ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງບໍລິຄຳໄຊ

ເລກທີ 583 /ຂບຊ
ບໍລິຄຳໄຊ, ວັນທີ 22 ກັນຍາ 2023

ຂໍ້ຕົກລົງ
ວ່າດ້ວຍ ນະໂຍບາຍ ແລະ ລາຄາຫົວໜ່ວຍ
ທົດແທນຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກ ໂຄງການປັບປຸງ
ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້ (ກມ 21 ຫາ ກມ 71)
ເຂດບ້ານນາໄຊ ແລະ ບ້ານໄຊສະຫວ່າງ (ກມ 66 ຫາ ກມ 71) ເມືອງທ່າພະບາດ ແຂວງບໍລິຄຳໄຊ

- ອີງຕາມ ກົດໝາຍ ວ່າດ້ວຍ ການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍ ວ່າດ້ວຍ ການສ້າງນິຕິກຳ ສະບັບເລກທີ 06/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍ ທາງຫຼວງແຫ່ງຊາດ ສະບັບເລກທີ 03/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ດຳລັດ ລັດຖະບານ ວ່າດ້ວຍ ການທົດແທນຄ່າເສຍຫາຍ ແລະ ການຈັດສັນຍົກຍ້າຍປະຊາຊົນຈາກ ໂຄງການພັດທະນາ ສະບັບເລກທີ 84/ລບ, ລົງວັນທີ 5 ເມສາ 2016;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນ ເທື່ອທີ V ຂອງສະພາປະຊາຊົນ ແຂວງບໍລິຄຳໄຊ ຊຸດທີ II ສະບັບ ເລກທີ 71/ສພຂ.ບຊ, ລົງວັນທີ 6 ກັນຍາ 2023.

ເຈົ້າແຂວງ ຕົກລົງ:

ໝວດທີ 1
ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ, ເງື່ອນໄຂ ແລະ ມາດຕະການ ກ່ຽວກັບ ນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນ ຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກ ໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້, ຂອງແຂວງ ບໍລິຄຳໄຊ ເພື່ອໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການ ແນ່ໃສ່ປົກປ້ອງສິດ, ຜົນປະໂຫຍດອັນຊອບທຳຂອງປະຊາຊົນ, ຮັບປະກັນຄວາມສະເໝີພາບ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດ ສອບໄດ້; ປະກອບສ່ວນເຂົ້າໃນການສ້າງສາພັດທະນາຕາມແຜນຍຸດທະສາດຂອງ ແຂວງບໍລິຄຳໄຊ ໃນແຕ່ລະ ໄລຍະ.

ມາດຕາ 2 ນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນ

ນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຕໍ່ຊັບສິນທີ່ໄດ້ຮັບຜົນກະທົບ ຈາກໂຄງການປັບປຸງ ແລະ ສ້ອມ ແປງທາງຫຼວງແຫ່ງຊາດເລກທີ 13 ໃຕ້ ແມ່ນການກຳນົດເງື່ອນໄຂ ແລະ ລາຄາຫົວໜ່ວຍທົດແທນຕໍ່ຜູ້ທີ່ໄດ້ຮັບຜົນ

ມາດຕາ 2 ນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນ

ນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຕໍ່ຊັບສິນທີ່ໄດ້ຮັບຜົນກະທົບ ຈາກໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດເລກທີ 13 ໃຕ້ ແມ່ນການກຳນົດເງື່ອນໄຂ ແລະ ລາຄາຫົວໜ່ວຍທົດແທນຕໍ່ຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດ ເລກທີ 13 ໃຕ້ (ກມ 21 ຫາ ກມ 71) ເຂດບ້ານ ນາໄຊ ແລະ ບ້ານໄຊສະຫວ່າງ (ກມ 66 ຫາ ກມ 71) ເມືອງທ່າພະບາດ ແຂວງບໍລິຄຳໄຊ ຊຶ່ງປະກອບມີເນື້ອທີ່ດິນ ສິ່ງປຸກສ້າງ ແລະ ຄ່າເສຍໂອກາດ.

ມາດຕາ 3 ອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດເລກທີ 13 ໃຕ້** ໝາຍເຖິງການປັບປຸງທາງໃຫ້ມີຄວາມທົນທານຕໍ່ການປ່ຽນແປງຕາມສະພາບດິນຟ້າອາກາດ ແລະ ການຍົກລະດັບຂີດຄວາມສາມາດຂອງການຮັບນ້ຳໜັກຂອງທາງ ຕາມມາດຕະຖານຂອງທາງຫຼວງອາຊຽນໃຫ້ດີຂຶ້ນກວ່າເກົ່າ;
2. **ຜູ້ໄດ້ຮັບຜົນກະທົບ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຄວາມເສຍຫາຍ ຕໍ່ຊັບສິນໃດໜຶ່ງຈາກກິດຈະກຳ ຂອງໂຄງການພັດທະນາ;
3. **ການຍົກຍ້າຍ** ໝາຍເຖິງ ການຍົກຍ້າຍຊັບສິນບາງສ່ວນ ຫຼື ຍົກຍ້າຍສະເພາະຊັບສິນທີ່ໄດ້ຮັບຜົນກະທົບເທົ່ານັ້ນ ອອກຈາກພື້ນທີ່ ທີ່ໄດ້ຮັບຜົນກະທົບໄປຍັງພື້ນທີ່ ທີ່ບໍ່ຖືກຜົນກະທົບ;
4. **ການຊ່ວຍເຫຼືອໃນໄລຍະຂ້າມຜ່ານຕໍ່ຜູ້ທີ່ໄດ້ຮັບຜົນກະທົບ** ໝາຍເຖິງ ການຊ່ວຍເຫຼືອຈາກເຈົ້າຂອງໂຄງການ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບ ຕໍ່ເຮືອນ ແລະ ຮ້ານຄ້າ ໃນໄລຍະການກໍ່ສ້າງເຮືອນ ຫຼື ຮ້ານຄ້າຄືນໃໝ່ໃນໄລຍະທີ່ບໍ່ສາມາດດຳເນີນທຸລະກິດໄດ້;
5. **ສິດນຳໃຊ້ເນື້ອທີ່ດິນຕາມກົດໝາຍ** ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ທີ່ມີເອກະສານສິດຄົບຖ້ວນຕາມກົດໝາຍທີ່ກ່ຽວຂ້ອງ;
6. **ເນື້ອທີ່ດິນເຂດຊານເມືອງ** ໝາຍເຖິງເຂດເນື້ອທີ່ດິນທີ່ຢູ່ອ້ອມຮອບເຂດອ້ອມໃຈກາງຕົວເມືອງ, ເປັນເຂດທີ່ມີຄວາມໜາແໜ້ນຂອງສິ່ງກໍ່ສ້າງຕ່ຳກວ່າເຂດອ້ອມຕົວເມືອງ, ມີກິດຈະກຳ, ກະສິກຳ, ຫັດຖະກຳ ແລະ ໂຮງງານອຸດສາຫະກຳອັນດັບສອງ ແລະ ອັນດັບສາມ, ລວມທັງມີເຂດເປົ່າວ່າງຫຼາຍ;
7. **ທາງຫຼວງແຫ່ງຊາດ** ໝາຍເຖິງ ທາງເຊື່ອມຈອດລະຫວ່າງ ນະຄອນຫຼວງໄປຫາເທດສະບານຂອງແຂວງ, ລະຫວ່າງແຂວງຫາແຂວງ, ທາງຍຸດທະສາດສາຍຫຼັກ ທີ່ໄດ້ຮັບຜົນປະໂຫຍດລວມຂອງຊາດ, ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ຜົນປະໂຫຍດລະຫວ່າງຊາດ ທັງມີຄວາມສຳຄັນທາງດ້ານເສດຖະກິດ-ສັງຄົມ ແລະ ເຊື່ອມຈອດ ກັບດ່ານສາກົນ ແລະ ລະຫວ່າງປະເທດ;
8. **ເຂດສະຫງວນຢູ່ໜ້າດິນຂອງທາງຫຼວງແຫ່ງຊາດ** ໝາຍເຖິງ ການກຳນົດພື້ນທີ່ທາງຫຼວງແຫ່ງຊາດມີ ລວງກວ້າງເບື້ອງລະ 25 ມ (ຊາວຫ້າ ແມັດ) ນັບແຕ່ໃຈກາງທາງອອກໄປ;
9. **ການຊ່ວຍເຫຼືອພິເສດ** ໝາຍເຖິງ ການຊ່ວຍເຫຼືອເປັນວັດຖຸ ຫຼື ເປັນເງິນ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບທີ່ຈັດຢູ່ໃນປະເພດຄອບຄົວທີ່ຖືກຍົກຍ້າຍເຮືອນ ແລະ ຮ້ານຄ້າໝົດຫຼັງ;
10. **ການສູນເສຍລາຍໄດ້** ໝາຍເຖິງການສູນເສຍລາຍໄດ້ ຈາກການປິດກິດຈະການ ໃນໄລຍະການກໍ່ສ້າງໂຄງການ;
11. **ສິ່ງປຸກສ້າງສຳຮອງ** ໝາຍເຖິງ ເຮືອນຄົວ, ເທິບເຮືອນ, ເທິບຮ້ານ, ຫ້ອງນ້ຳ, ຮ້ານສ້ອມແປງລົດ, ຮົ້ວ, ກຳແພງ, ຕູບ;
12. **ລະບົບສາທາລະນຸປະໂພກ** ໝາຍເຖິງ ການສະໜອງສິ່ງອຳນວຍຄວາມສະດວກ ທາງການບໍລິການສາທາລະນະ ທີ່ຈຳເປັນ ເຊັ່ນ: ໄຟຟ້າ, ນ້ຳປະປາ, ໂທລະສັບ, ສາຍສື່ງແຫ່ງຊາດ (ສາຍໄຍແກ້ວ) ແລະ ອື່ນໆ.

ມາດຕາ 4 ນະໂຍບາຍຂອງລັດ

ລັດ ສົ່ງເສີມ ແລະ ອຳນວຍຄວາມສະດວກໃຫ້ແກ່ ຜູ້ໃຫ້ທຶນເຂົ້າໃນການພັດທະນາໂຄງການດັ່ງກ່າວ ໃຫ້ໄປຕາມຈຸດປະສົງ, ປະກອບສ່ວນຕາມກົດໝາຍ ແລະ ລະບຽບການ.

ລັດ ຊຸກຍູ້ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ອຳນວຍຄວາມສະດວກໃຫ້ແກ່ຜູ້ໃຫ້ທຶນ ແລະ ຜູ້ຮັບ ເ ໝົ ກໍ່ສ້າງໃຫ້ໄດ້ຈັດຕັ້ງປະຕິບັດຕາມແຜນການ.

ລັດ ປົກປ້ອງສິດ, ຜົນປະໂຫຍດອັນຊອບທຳຂອງປະຊາຊົນ, ນິຕິບຸກຄົນ ແລະ ຜູ້ໃຫ້ທຶນພັດທະນາ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ມາດຕາ 5 ຫຼັກການພື້ນຖານໃນການຈັດຕັ້ງປະຕິບັດ

ໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດເລກທີ 13 ໃຕ້ ປະຕິບັດຕາມຫຼັກການພື້ນຖານດັ່ງນີ້:

1. ໃຫ້ຖືກຕ້ອງສອດຄ່ອງຕາມນະໂຍບາຍຂອງລັດ, ລັດຖະທຳມະນູນ, ກົດໝາຍ, ລະບຽບການ ແລະ ແຜນພັດທະນາ ເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງ ຂອງແຂວງບໍລິຄຳໄຊ;
2. ມີການປະສານສົມທົບ, ປຶກສາຫາລື, ເຂົ້າຮ່ວມລະຫວ່າງພາກລັດ, ຜູ້ໃຫ້ທຶນພັດທະນາ ແລະ ຜູ້ທີ່ໄດ້ຮັບຜົນກະທົບ;
3. ຮັບປະກັນສິດຜົນປະໂຫຍດຂອງລັດ, ລວມໝູ່, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
4. ຮັບປະກັນຄວາມສະເໝີພາບ, ຖືກຕ້ອງ, ໂປ່ງໃສ, ເປີດເຜີຍ, ຍຸຕິທຳ ແລະ ສາມາດກວດສອບໄດ້.

ມາດຕາ 6 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ແມ່ນນຳໃຊ້ສະເພາະຊັບສິນຂອງປະຊາຊົນໃນໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດເລກທີ 13 ໃຕ້ ແຕ່ ກມ 21 ຫາ ກມ 71, ຊຶ່ງປະກອບມີຄອບຄົວທີ່ໄດ້ຮັບຜົນກະທົບຢູ່ໃນ 2 ບ້ານໃນໄລຍະ ກມ 66 ຫາ ກມ 71 ຄື: ບ້ານນາໄຊ ແລະ ບ້ານໄຊສະຫວ່າງ ເມືອງທ່າພະບາດ ແຂວງບໍລິຄຳໄຊ; ສຳລັບລະບົບສາທາລະນຸປະໂພກ ຂອງລັດ ຈະໄດ້ມີການປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດຕາມລະບຽບການ.

ໝວດທີ 2
ຮູບແບບຜົນກະທົບຕໍ່ຊັບສິນ, ປະເພດຊັບສິນ ແລະ ລະດັບຜູ້ທີ່ໄດ້ຮັບຜົນກະທົບ

ມາດຕາ 7 ຮູບແບບຜົນກະທົບຕໍ່ຊັບສິນ

ການຈັດຕັ້ງປະຕິບັດໂຄງການ ຈະມີຜົນກະທົບໂດຍກົງ ຕໍ່ຊັບສິນ ໃນ 2 ຮູບແບບຄື:

1. **ຜົນກະທົບແບບຖາວອນ:** ແມ່ນຜົນກະທົບຕໍ່ຊັບສິນທີ່ນອນໃນເຂດຂອງໂຄງການ, ຊັບສິນທີ່ຖືກຜົນກະທົບ ຈະສູນເສຍສິດນຳໃຊ້ຢ່າງຖາວອນ ໂດຍຈະໄດ້ມອບສິດການນຳໃຊ້ ໃຫ້ກັບເຈົ້າຂອງໂຄງການເປັນຜູ້ນຳໃຊ້ແບບຖາວອນ;
2. **ຜົນກະທົບແບບຊົ່ວຄາວ:** ແມ່ນຜົນກະທົບຄ່າເສຍໂອກາດ ຈາກການນຳໃຊ້ພື້ນທີ່ໃນໄລຍະການກໍ່ສ້າງເທົ່ານັ້ນ ພາຍຫຼັງຈາກສຳເລັດການກໍ່ສ້າງໂຄງການ, ເຈົ້າຂອງໂຄງການ ຈະຕ້ອງໄດ້ປັບປຸງໃຫ້ຢູ່ໃນສະພາບເດີມ, ສາມາດນຳໃຊ້ໄດ້ ແລະ ສົ່ງຄືນເຈົ້າຂອງເດີມສືບຕໍ່ນຳໃຊ້.

ມາດຕາ 8 ປະເພດຊັບສິນ

ປະເພດຊັບສິນ ຢູ່ໃນຂົງເຂດໂຄງການນີ້ ບ້ານ ນາໄຊ ແລະ ບ້ານ ໄຊສະຫວ່າງ (ກມ 66 ຫາ ກມ 71) ເມືອງ ທ່າພະບາດ ແຂວງ ບໍລິຄຳໄຊ ປະກອບມີຊັບສິນຫຼັກ ຄື: ຊັບສິນປະເພດເນື້ອທີ່ດິນ, ສິ່ງປຸກສ້າງ, ລະບົບສາທາລະນຸປະໂພກ ແລະ ອື່ນໆ.

1. **ປະເພດເນື້ອທີ່ດິນ** ແມ່ນເນື້ອທີ່ດິນ ທີ່ນອນໃນເຂດຂອງໂຄງການນີ້ປະກອບມີດັ່ງນີ້:

- **ເນື້ອທີ່ດິນປຸກສ້າງ** ແມ່ນເນື້ອທີ່ດິນທີ່ນຳໃຊ້ເພື່ອປຸກສ້າງ ແລະ ຕ້ອງປະກອບມີ ສິ່ງປຸກສ້າງຕັ້ງຢູ່ໃນເນື້ອທີ່ດິນຕອນນັ້ນໃນເວລາເກັບຂໍ້ມູນ ຫຼື ມີເອກະສານສິດລະບຸເປັນເນື້ອທີ່ດິນປຸກສ້າງ (ແຕ່ຍັງບໍ່ທັນມີສິ່ງປຸກສ້າງ) ໃຫ້ສອດຄ່ອງກັບລະບຽບຫຼັກການອອກໃບຕາດິນ;

2. **ຊັບສິນປະເພດສິ່ງປຸກສ້າງ** ປະກອບມີ: ເຮືອນ, ຮ້ານຂາຍເຄື່ອງ, ຮ້ານບໍລິການອື່ນໆ ແລະ ສິ່ງປຸກສ້າງສຳຮອງປະກອບມີ: ເຮືອນຄົວ, ເທິບເຮືອນ, ເທິບຮ້ານ, ຫ້ອງນ້ຳ, ຮ້ານສ້ອມແປງລົດ, ຮົ້ວ, ກຳແພງ, ຕູບ;
3. **ລະບົບສາທາລະນຸປະໂພກ** ປະກອບມີ: ໄຟຟ້າ, ນ້ຳປະປາ, ໂທລະສັບ, ສາຍສົ່ງແຫ່ງຊາດ (ສາຍໄຍແກ້ວ) ແລະ ອື່ນໆ.

ມາດຕາ 9 ລະດັບຂອງຜູ້ໄດ້ຮັບຜົນກະທົບ

ຜູ້ໄດ້ຮັບຜົນກະທົບຈາກໂຄງການໝາຍເຖິງ ບຸກຄົນ, ນິຕິບຸກຄົນ, ຊຸມຊົນ, ຊັບສິນລວມຂອງລັດ ທີ່ໄດ້ຮັບຜົນກະທົບຈາກກິດຈະກຳຂອງໂຄງການ ຊຶ່ງມີຫຼາຍລະດັບທີ່ແຕກຕ່າງກັນດັ່ງນີ້:

1. **ລະດັບທີ 1 ຜູ້ຖືກຍົກຍ້າຍຈັດສັນ ຖືວ່າຈັດຢູ່ໃນປະເພດຜົນກະທົບລະດັບສູງ** ແມ່ນຜູ້ທີ່ໄດ້ຮັບຜົນກະທົບຕໍ່ເຮືອນ ຫຼື ຮ້ານ ຊຶ່ງເນື້ອທີ່ຍັງເຫຼືອບໍ່ພຽງພໍໃນການຢູ່ອາໄສຕໍ່ໄປໄດ້ ຈຳເປັນຕ້ອງຍົກຍ້າຍອອກຈາກບ່ອນເດີມໄປຢູ່ບ່ອນໃໝ່ທີ່ຢູ່ໃກ້ຄຽງ;
2. **ລະດັບທີ 2 ຜູ້ໄດ້ຮັບຜົນກະທົບລະດັບປານກາງ** ແມ່ນຜູ້ທີ່ໄດ້ຮັບຜົນກະທົບຕໍ່ຊັບສິນ ເທົ່າກັບ ຫຼື ຫຼາຍກວ່າ 10% ຂຶ້ນໄປຂອງຈຳນວນຊັບສິນທັງໝົດທີ່ຄອບຄອງໃນປະຈຸບັນ;
3. **ລະດັບທີ 3 ຜູ້ຖືກກະທົບລະດັບເບົາ** ແມ່ນຜູ້ໄດ້ຮັບຜົນກະທົບເບົາບາງ, ຜູ້ໄດ້ຮັບຜົນກະທົບຕໍ່ຊັບສິນ 10% ລົງມາຂອງຈຳນວນຊັບສິນທັງໝົດທີ່ເຂົາເຈົ້າຄອບຄອງໃນປະຈຸບັນ.

ໝວດທີ 3
ນະໂຍບາຍ ແລະ ເງື່ອນໄຂ ການທົດແທນຄ່າເສຍຫາຍ

ມາດຕາ 10 ນະໂຍບາຍການທົດແທນຄ່າເສຍຫາຍ

ຜູ້ທີ່ໄດ້ຮັບຜົນກະທົບ ຈະໄດ້ຮັບນະໂຍບາຍການທົດແທນດັ່ງນີ້:

1. ຜູ້ທີ່ໄດ້ຮັບຜົນກະທົບ ກ່ຽວກັບ ສິດນຳໃຊ້ເນື້ອທີ່ດິນຖືກຕ້ອງຕາມກົດໝາຍ ທີ່ສູນເສຍເນື້ອທີ່ດິນທັງໝົດ ຫຼື 80% ຂຶ້ນໄປ, ສ່ວນເນື້ອທີ່ດິນທີ່ຍັງເຫຼືອບໍ່ສາມາດນຳໃຊ້ໄດ້ອີກ ເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍທັງໝົດ;
2. ຜູ້ໄດ້ຮັບຜົນກະທົບ ກ່ຽວກັບ ສິດນຳໃຊ້ເນື້ອທີ່ດິນຖືກຕ້ອງຕາມກົດໝາຍ ຫາກໄດ້ສູນເສຍເນື້ອທີ່ດິນພຽງສ່ວນໃດໜຶ່ງ, ສ່ວນເນື້ອທີ່ດິນທີ່ຍັງເຫຼືອສາມາດນຳໃຊ້ໄດ້ ເຈົ້າຂອງໂຄງການຕ້ອງໄດ້ທົດແທນຄ່າເສຍຫາຍໃນສ່ວນທີ່ໄດ້ສູນເສຍນັ້ນ ດ້ວຍມູນຄ່າເປັນເງິນທີ່ຄິດໄລ່ໄວ້, ສ່ວນເນື້ອທີ່ດິນ ທີ່ຍັງເຫຼືອທີ່ສາມາດນຳໃຊ້ໄດ້ ຜູ້ທີ່ໄດ້ຮັບຜົນກະທົບ ຕ້ອງໄດ້ຮັບເອກະສານກ່ຽວກັບສິດນຳໃຊ້ເນື້ອທີ່ດິນຕອນນັ້ນຄືນໃໝ່ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ໂດຍເຈົ້າຂອງໂຄງການ ຕ້ອງເປັນຜູ້ຮັບຜິດຊອບຄ່າໃຊ້ຈ່າຍຕ່າງໆທັງໝົດ ທີ່ເກີດຂຶ້ນຈາກການປ່ຽນແປງສິດນຳໃຊ້ເນື້ອທີ່ດິນ;
3. ຜູ້ທີ່ສູນເສຍສິ່ງປຸກສ້າງທັງໝົດ ຫຼື ບາງສ່ວນ ເຈົ້າຂອງໂຄງການ ຕ້ອງໄດ້ທົດແທນຄ່າເສຍຫາຍ ດ້ວຍມູນຄ່າປ່ຽນແທນຂອງສິ່ງປຸກສ້າງດັ່ງກ່າວ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບທີ່ເປັນເຈົ້າຂອງກຳມະສິດຂອງສິ່ງປຸກສ້າງນັ້ນ ໂດຍບໍ່ມີການຫັກຄ່າຫຼຸ້ຍຫ້ຽນ ຫຼື ບໍ່ມີການຫຼຸດຄ່າທົດແທນສຳລັບວັດຖຸທີ່ຍັງເຫຼືອ;
4. ການປະຕິບັດການທົດແທນຄ່າເສຍຫາຍ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນກະທົບໃນທຸກໆກໍລະນີ ເຈົ້າຂອງໂຄງການ ຕ້ອງໄດ້ປະສານສົມທົບກັບ ຄະນະຮັບຜິດຊອບການທົດແທນຄ່າເສຍຫາຍຂັ້ນແຂວງ ເພື່ອຕິດຕາມກວດກາ, ຢັ້ງຢືນຄວາມຖືກຕ້ອງ ແລະ ຄົບຖ້ວນ ຕາມແຜນທົດແທນຄ່າເສຍຫາຍ;

5. ຊັບສິນທີ່ມີຂໍ້ຂັດແຍ່ງກັບບຸກຄົນອື່ນ ຫຼື ອົງການຈັດຕັ້ງໃດໜຶ່ງ ຕ້ອງໄດ້ສ້າງບົດບັນທຶກຕົວເລກຜົນກະທົບຄ່າເສຍຫາຍໄວ້, ພາຍຫຼັງທີ່ສຳເລັດການແກ້ໄຂຂໍ້ຂັດແຍ່ງແລ້ວ ຈຶ່ງໃຫ້ສະເໜີຂໍການທົດແທນ;
6. ການຄິດໄລ່ລາຄາຫົວໜ່ວຍທົດແທນ ໄດ້ກຳນົດໃວ້ໃນມາດຕາ 16 ຂອງຂໍ້ຕົກລົງສະບັບນີ້;
7. ການຊ່ວຍເຫຼືອພິເສດ ແມ່ນການຊ່ວຍຄອບຄົວທີ່ມີເງື່ອນໄຂຄົບຖ້ວນ ຈຶ່ງຈະໄດ້ຮັບການຊ່ວຍເຫຼືອພິເສດ ໃນຮູບແບບເປັນເງິນຕາມເງື່ອນໄຂຄື:
   (1) ເປັນຄອບຄົວທີ່ຖືກຍົກຍ້າຍເຮືອນ, ຊຶ່ງຈະມີການຊ່ວຍເຫຼືອໃນອັດຕາ 420.000 ກີບ/ເດືອນ/ຄົນ ຕາມໄລຍະເວລາຈິນສາມາດປຸກສ້າງເຮືອນໃໝ່ສຳເລັດ ຊຶ່ງບໍ່ເກີນ 3 ເດືອນ;
   (2) ເປັນຄອບຄົວຜູ້ດ້ອຍໂອກາດ, ຊຶ່ງຈະມີການຊ່ວຍເຫຼືອໃນອັດຕາ 420.000 ກີບ/ເດືອນ/ຄົນ ຕາມໄລຍະເວລາຕົວຈິງຂອງການກໍ່ສ້າງ ແລະ ສ້ອມແປງເສັ້ນທາງ ໃນເຂດທີ່ໄດ້ຮັບຜົນກະທົບຂອງຄອບຄົວຜູ້ດ້ອຍໂອກາດ ດັ່ງກ່າວ ແຕ່ບໍ່ເກີນ 3 ເດືອນ;
   (3) ເປັນຄອບຄົວທີ່ຍົກຍ້າຍຮ້ານຄ້າ ແລະ ຮ້ານບໍລິການຕ່າງໆ, ຊຶ່ງຈະມີການຊ່ວຍເຫຼືອໃນອັດຕາ 420.000 ກີບ/ເດືອນ/ຄົນ ຕາມໄລຍະເວລາການຍ້າຍຮ້ານຕົວຈິງ ເພື່ອການກໍ່ສ້າງ ແລະ ສ້ອມແປງເສັ້ນທາງ ບໍ່ເກີນ 3 ເດືອນ;
8. ຮ້ານຄ້າ ແລະ ຮ້ານບໍລິການ ຈະໄດ້ຮັບການທົດແທນຄ່າເສຍໂອກາດລາຍໄດ້ ໃນຊ່ວງໄລຍະດຳເນີນການກໍ່ສ້າງໂຄງການທີ່ບໍ່ສາມາດເປີດໃຫ້ບໍລິການໄດ້ ຊຶ່ງຈະມີການຄິດໄລ່ຕາມໄລຍະເວລາການປິດຮ້ານຕົວຈິງ (ຕາມການປຶກສາຫາລື ແລະ ເຮັດບົດບັນທຶກກັບຜູ້ໄດ້ຮັບຜົນກະທົບຕົວຈິງ), ໂດຍຈະເອົາມູນຄ່າກຳໄລທີ່ຄິດໄລ່ລຽງຈາກການມອບຈ່າຍອາກອນ (ປະມານ 1-3% ຕາມປະເພດຂອງທຸລະກິດ ແລະ ບໍລິການ) ທີ່ເປັນລາຍເດືອນ ອອກມາເປັນຄ່າສະເລ່ຍເປັນອັນມາຄູນໃຫ້ ໄລຍະທີ່ເສຍໂອກາດ (ມື້) ການສ້າງລາຍໄດ້ມາເປັນພື້ນຖານ ໃນການຄິດໄລ່ການທົດແທນຄ່າເສຍໂອກາດລາຍໄດ້ ໃນຊ່ວງໄລຍະທີ່ບໍ່ສາມາດດຳເນີນທຸລະກິດໄດ້;
9. ທໍ່ລະບາຍນ້ຳ ທີ່ໄດ້ຮັບຜົນກະທົບຈະບໍ່ມີການທົດແທນຄືນ ແຕ່ທາງໂຄງການຈະຊ່ວຍເຫຼືອໃນການຕິດຕັ້ງທໍ່ຄືນໃໝ່ ຊຶ່ງທໍ່ດັ່ງກ່າວຈະຕ້ອງເປັນຂອງປະຊາຊົນຊື້ມາເອງ ຊຶ່ງຂະໜາດຕາມຄວາມເໝາະສົມ ດ້ານວິຊາການ ແລະ ການລະບາຍນ້ຳຕົວຈິງ (ຂະໜາດທໍ່ ø 60 - ø 80);
10. ຖ້າວ່າທາງຊອຍ (ທາງເຂົ້າບ້ານ) ແລະ ທາງເຂົ້າວັດ ມີລະດັບທີ່ຕ່ຳກວ່າທາງທີ່ກໍ່ສ້າງໃໝ່ ແລະ ບໍ່ສາມາດເຂົ້າອອກໄດ້ສະດວກຄືເກົ່າ ທາງໂຄງການຈະຕ້ອງໄດ້ປັບຄວາມສູງຂອງທາງເຂົ້າຊອຍນັ້ນ ໃຫ້ພຽງທາງໃໝ່ ເພື່ອໃຫ້ສາມາດທ່ຽວໄດ້ເປັນປົກກະຕິຄືເກົ່າ;
11. ຕົ້ນໄມ້, ດອກໄມ້ ຫຼື ຕົ້ນໄມ້ປະດັບ ທີ່ນອນໃນເຂດສະຫງວນຂອງທາງຫຼວງແຫ່ງຊາດ ແມ່ນຈະບໍ່ໄດ້ຮັບການທົດແທນ;
12. ປ້າຍໂຄສະນາຕ່າງໆທີ່ໄດ້ຮັບ ຫຼື ບໍ່ໄດ້ຮັບອະນຸຍາດຢ່າງຖືກຕ້ອງຈາກພາກລັດ ກໍ່ຄືຈາກພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງບໍລິຄຳໄຊ ແລະ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງບໍລິຄຳໄຊ ແມ່ນຈະຕ້ອງໄດ້ຮັບການຍົກຍ້າຍອອກໄປດ້ວຍເຈົ້າຂອງປ້າຍເອງ ໂດຍບໍ່ມີການທົດແທນໃດໆຈາກໂຄງການ.

ມາດຕາ 11 ເງື່ອນໄຂການຂຶ້ນບັນຊີຊັບສິນຕໍ່ຜູ້ທີ່ໄດ້ຮັບຜົນກະທົບ

ເງື່ອນໄຂການຂຶ້ນບັນຊີຕໍ່ຜູ້ໄດ້ຮັບຜົນກະທົບຈາກໂຄງການ ໃນເຂດ ບ້ານນາໄຊ ແລະ ບ້ານໄຊສະຫວ່າງ (ກມ 66 ຫາ ກມ 71) ເມືອງທ່າພະບາດ ແຂວງບໍລິຄຳໄຊ ມີລາຍລະອຽດດັ່ງນີ້:

1. ຕ້ອງແມ່ນ ຊັບສິນທີ່ນອນຢູ່ໃນເຂດໂຄງການ;
2. ຕ້ອງແມ່ນ ເນື້ອທີ່ດິນທີ່ມີເອກະສານຢັ້ງຢືນສິດນຳໃຊ້ເນື້ອທີ່ດິນ ຢ່າງຖືກຕ້ອງຕາມກົດໝາຍ;
3. ສຳລັບສິ່ງປຸກສ້າງ ຕ້ອງແມ່ນສິ່ງປຸກສ້າງທີ່ສາມາດນຳໃຊ້ໄດ້.

ມາດຕາ 12 ເງື່ອນໄຂການທົດແທນຕໍ່ຊັບສິນໄດ້ຮັບຜົນກະທົບ

ຊັບສິນທີ່ໄດ້ຮັບຜົນກະທົບຈາກການພັດທະນາໂຄງການ ທີ່ມີສິດໄດ້ຮັບການທົດແທນ ມີຄືດັ່ງນີ້:

- ຕ້ອງແມ່ນຊັບສິນທີ່ມີກ່ອນມື້ປະກາດເລີ່ມຕົ້ນໂຄງການ ໃນວັນທີ 28 ກັນຍາ 2022;
- ໄດ້ຮັບການຂຶ້ນບັນຊີ;
- ໄດ້ມີການຮັບຮອງຈາກຄະນະກຳມະການທີ່ກ່ຽວຂ້ອງ .

ສຳລັບຊັບສິນ ທີ່ເກີດຂຶ້ນພາຍຫຼັງມື້ປະກາດເລີ່ມຕົ້ນໂຄງການ ຫຼື ບໍ່ຜ່ານການຮັບຮອງຈາກຄະນະກຳມະການຈະບໍ່ໄດ້ຮັບພິຈາລະນາທົດແທນ.

ມາດຕາ 13 ເງື່ອນໄຂໄດ້ຮັບການທົດແທນຄ່າເສຍຫາຍ

ການໄດ້ຮັບເງິນທົດແທນຄ່າເສຍຫາຍມີດັ່ງນີ້:

- ຜ່ານການຕີລາຄາຄິດໄລ່ ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ, ຍົກຍ້າຍສິ່ງກີດຂວາງ ແລະ ຄົ້ນຄວ້າຮ່າງນະໂຍບາຍ, ລາຄາຫົວໜ່ວຍທົດແທນຜົນກະທົບຈາກໂຄງການນີ້ຮ່ວມກັບ ເຈົ້າຂອງກຳມະສິດ ຜູ້ທີ່ໄດ້ຮັບຜົນກະທົບ;
- ສະເໜີໃຫ້ປະທານຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ, ຍົກຍ້າຍສິ່ງກີດຂວາງ ແລະ ຄົ້ນຄວ້າຮ່າງນະໂຍບາຍ, ລາຄາຫົວໜ່ວຍທົດແທນຜົນກະທົບຈາກໂຄງການນີ້ ຮັບຮອງຢ່າງເປັນທາງການ;
- ຜູ້ໄດ້ຮັບຜົນກະທົບ ຈະຕ້ອງມີບັນຊີເງິນຝາກທະນາຄານ (ຖ້າຄອບຄົວໃດບໍ່ມີບັນຊີ ທາງໂຄງການຈະຊ່ວຍເປີດບັນຊີໃຫ້ໂດຍບໍ່ເສຍຄ່າບໍລິການເປີດ, ສຳລັບເງິນຝາກບັນຊີ 50.000ກີບ ແມ່ນຜູ້ໄດ້ຮັບຜົນກະທົບ ເປັນຜູ້ຮັບຜິດ ຊອບເອງ).

ມາດຕາ 14 ການທົດແທນຄ່າເສຍຫາຍ

ການທົດແທນຄ່າເສຍຫາຍຕໍ່ຜູ້ທີ່ໄດ້ຮັບຜົນກະທົບ ຈາກໂຄງການນີ້ ແມ່ນນຳໃຊ້ງົບປະມານຂອງລັດຖະບານລາວ (ງົບປະມານກອງທຶນທາງ) ໂດຍຄິດໄລ່ດ້ວຍມູນຄ່າປ່ຽນແທນເປັນເງິນກີບ ດ້ວຍການໂອນເຂົ້າບັນຊີຂອງຜູ້ໄດ້ຮັບຜົນກະທົບ, ການທົດແທນຕ້ອງໄດ້ຊຳລະໃຫ້ສຳເລັດກ່ອນວັນເລີ່ມຕົ້ນການກໍ່ສ້າງ.

ໝວດທີ 4
ຫຼັກການກຳນົດ, ການນຳໃຊ້ ແລະ ວິທີການຄິດໄລ່ລາຄາຫົວໜ່ວຍທົດແທນ

ມາດຕາ 15 ຫຼັກການກຳນົດລາຄາຫົວໜ່ວຍທົດແທນ

1. **ປະເພດເນື້ອທີ່ດິນ** ແມ່ນໄດ້ມີການສົມທຽບຂໍ້ມູນຈາກຫຼາຍແຫ່ງ ເພື່ອກຳນົດອອກມານຳໃຊ້ເປັນລາຄາຫົວໜ່ວຍທົດແທນໃຫ້ແທດເໝາະກັບສະພາບທ້ອງຖິ່ນເຊັ່ນ: ເອົາຂໍ້ມູນ ການຊື້-ຂາຍ ເນື້ອທີ່ດິນຕາມທ້ອງຕະຫຼາດ ໃນແຕ່ລະທ້ອງຖິ່ນ, ເພື່ອມາສົມທຽບກັບລາຄາເນື້ອທີ່ດິນ ຕາມຂໍ້ຕົກລົງ ເລກທີ 193/ຂບຊ, ລົງວັນທີ 6 ເມສາ 2023 ວ່າດ້ວຍການປະເມີນຫົວໜ່ວຍທີ່ດິນພາຍໃນແຂວງບໍລິຄຳໄຊ ແລະ ລາຄາເນື້ອທີ່ດິນຂອງໂຄງການທີ່ໄດ້ຮັບການທົດແທນຜ່ານມາ (ຊ່ວງ ກມ 71 - ກມ 346 ທີ່ໄດ້ບວກອັດຕາເງິນເຟີ້ທີ່ກຳນົດໂດຍທະນາຄານກາງ ຊ່ວງທີ່ລົງເກັບກຳຂໍ້ມູນ ໃນເດືອນ ເມສາ 2023 ຄືຢູ່ທີ່ 40%) ແລ້ວເອົາມາຫານ 3, ເພື່ອການກຳນົດລາຄາທີ່ເໝາະສົມ ເພື່ອໃຫ້ສາມາດຈັດຕັ້ງປະຕິບັດໄດ້ ແລະ ໄດ້ກຳນົດເອົາລາຄາຫົວໜ່ວຍທົດແທນເປັນກີບຕໍ່ຫົວ ໜ່ວຍ ໂດຍແຍກຕາມປະເພດເນື້ອທີ່ດິນ ໃນລາຄາເປັນກີບ ຕໍ່ຕາແມັດ;
2. **ຊັບສິນປະເພດສິ່ງປຸກສ້າງ** ແມ່ນພື້ນຖານການກຳນົດລາຄາຫົວໜ່ວຍທົດແທນສິ່ງປຸກສ້າງ ແມ່ນການປະເມີນມູນຄ່າຂອງລາຄາວັດສະດຸກໍ່ສ້າງຕາມທ້ອງຕະຫລາດໃນໄລຍະການລົງເກັບກຳຂໍ້ມູນໃນເດືອນມັງກອນ ຫາ ກຸມພາ 2023 ມາບວກກັບລາຄາຫົວໜ່ວຍທີ່ທາງ ກະຊວງໂຍທາທິການ ແລະ ຂົນສົ່ງ ເລກທີ 26123/ຍທຂ,

ລົງວັນທີ 17 ທັນວາ 2021 ແລະ ບວກກັບລາຄາທົດແທນຊ່ວງ (ກມ 71 ກມ 346 ທີ່ໄດ້ບວກອັດຕາເງິນເຟີ້ທີ່ ກຳນົດໂດຍທະນາຄານກາງ ຊ່ວງທີ່ລົງເກັບກຳຂໍ້ມູນ ໃນເດືອນ ເມສາ 2023 ຄືຢູ່ທີ່ 40%) ແລ້ວມາຫານ 3.

ມາດຕາ 16 ລາຄາຫົວໜ່ວຍທົດແທນ

ລາຄາຫົວໜ່ວຍທົດແທນແມ່ນກຳນົດມູນຄ່າຕໍ່ກັບຊັບສິນທີ່ໄດ້ຮັບຜົນກະທົບຈາກໂຄງການ ໂດຍແຍກເປັນ 3 ລາຄາຫົວໜ່ວຍຂອງປະເພດສິ່ງປຸກສ້າງ ເຊິ່ງມີລາຍລະອຽດດັ່ງລຸ່ມນີ້:

ຕາຕະລາງ 1. ລາຍລະອຽດຊັບສິນປະເພດສິ່ງປຸກສ້າງ, ເນື້ອທີ່ດິນ ແລະ ການກຳນົດລາຄາຫົວໜ່ວຍທົດແທນຄ່າເສຍຫາຍໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການປັບປຸງ ແລະ ສ້ອມແປງເສັ້ນທາງເລກທີ 13 ໃຕ້ (ກມ 21 - ກມ 71) ເຂດບ້ານນາໄຊ ແລະ ບ້ານໄຊສະຫວ່າງ (ກມ 66 ຫາ ກມ 71) ເມືອງທ່າພະບາດ ແຂວງບໍລິຄຳໄຊ.

ລຳດັບ	ເນື້ອໃນລາຍການ	ຫົວໜ່ວຍ	ລາຄາ (ກີບ)		
			ລາຄາຕ່ຳ	ລາຄາກາງ	ລາຄາສູງ
I	ການກຳນົດລາຄາຫົວໜ່ວຍປະເພດສິ່ງປຸກສ້າງ				
ກ	**ເຮືອນຊັ້ນດຽວ ປະເພດ 01**				
1	ໂຄງສ້າງເບຕົ້ງ, ຝາກໍ່ດິນຈີ່, ມຸງກະເບື້ອງ	ມ^2	2.525.500	3.030.500	3.535.500
ຂ	**ເຮືອນຕຸບ ປະເພດ 03**		**ລາຄາຕ່ຳ**	**ລາຄາກາງ**	**ລາຄາສູງ**
1	ໂຄງສ້າງໄມ້,ພື້ນເບຕົ້ງ, ຝາໄມ້ປ່ອງ, ມຸງຫຍ້າ ຫຼື ມຸງຜ້າ	ມ^2	55.000	77.000	99.000
2	ໂຄງສ້າງໄມ້, ພື້ນເບຕົ້ງ,ຝາໄມ້ປ່ອງ, ມຸງສັງກະສີ	ມ^2	105.000	127.000	149.000
ຄ	**ຮ້ານອາຫານ, ເຮືອນຄົວ, ເຫີບເຮືອນ, ຮ້ານແປງລີດ, ຕຸບ**		**ລາຄາຕ່ຳ**	**ລາຄາກາງ**	**ລາຄາສູງ**
1	ເຮັດດ້ວຍໂຄງໄມ້ກົມ ຫຼື ໄມ້ແປຮູບ, ເທພື້ນເບຕົ້ງ, ມຸງສັງກະສີ ຫຼື ອາລຸຊິ້ງ (ຖ້າມີປະຕູມ້ວນ ຫຼື ແກ້ວ ໃຫ້ເອົາລາຄາສູງ)	ມ^2	521.500	730.000	1.022.000
2	ເຮັດດ້ວຍໂຄງໄມ້ກົມ ຫຼື ໄມ້ແປຮູບ, ເທພື້ນເບຕົ້ງ, ມຸງກະເບື້ອງ (ຖ້າມີປະຕູມ້ວນ ຫຼື ແກ້ວ ໃຫ້ເອົາລາຄາສູງ)	ມ^2	539.000	747.500	956.000
3	ເຮັດດ້ວຍໂຄງເຫຼັກ, ເທພື້ນເບຕົ້ງ, ມຸງສັງກະສີ ຫຼື ອາລຸຊິ້ງ (ຖ້າມີປະຕູມ້ວນ ຫຼື ແກ້ວ ໃຫ້ເອົາລາຄາສູງ)	ມ^2	541.500	750.500	958.500
4	ເຮັດດ້ວຍໂຄງເຫຼັກ, ເທພື້ນເບຕົ້ງ, ມຸງກະເບື້ອງ (ຖ້າມີປະຕູມ້ວນ ຫຼື ແກ້ວ ໃຫ້ເອົາລາຄາສູງ)	ມ^2	582.500	791.000	999.500
5	ເຮັດດ້ວຍໂຄງເບຕົ້ງ, ເທພື້ນເບຕົ້ງ, ມຸງສັງກະສີ ຫຼື ອາລຸຊິ້ງ (ຖ້າມີປະຕູມ້ວນ ຫຼື ແກ້ວ ໃຫ້ເອົາລາຄາສູງ)	ມ^2	602.500	811.000	1.019.500
6	ເຮັດດ້ວຍໂຄງເບຕົ້ງ, ເທພື້ນເບຕົ້ງ, ມຸງກະເບື້ອງ (ຖ້າມີປະຕູມ້ວນ ຫຼື ແກ້ວ ໃຫ້ເອົາລາຄາສູງ)	ມ^2	635.500	844.000	1.052.500
ງ	**ປະເພດຮົ້ວ**		**ລາຄາຕ່ຳ**	**ລາຄາກາງ**	**ລາຄາສູງ**
1	ກຳແພງກໍ່ດ້ວຍດິນຈີ່	ມຍ	384.000	464.000	544.000
2	ກຳແພງກໍ່ດ້ວຍດິນປ໊ອກ	ມຍ	325.000	405.000	485.000
3	ຮົ້ວເສົາເບຕົ້ງ ກັບ ຕາໜ່າງໜາກອກ	ມຍ	120.000	132.500	145.000
4	ຮົ້ວເສົາເບຕົ້ງ ກັບ ໜາມໜາກຈັບ(ໜາມໜາກຈັບ 5 ຮາວ)	ມຍ	97.000	109.500	122.000
5	ຮົ້ວເສົາເຫຼັກ ກັບ ຕາໜ່າງໜາກອກ	ມຍ	155.000	192.500	230.000
6	ຮົ້ວເສົາເຫຼັກ ກັບ ໜາມໜາກຈັບ (ໜາມໜາກຈັບ 5 ຮາວ)	ມຍ	132.000	169.500	207.000

ລຳດັບ	ເນື້ອໃນລາຍການ	ຫົວໜ່ວຍ	ລາຄາ (ກີບ)		
			ລາຄາຕ່ຳ	ລາຄາກາງ	ລາຄາສູງ
7	ຮົ້ວເສົາໄມ້ ກັບ ຕາໜ່າງໜາກອກ	ມຍ	85.000	100.000	115.000
8	ຮົ້ວເສົາໄມ້ ກັບ ໜາມໜາກຈັບ (ໜາມໜາກຈັບ 5 ຮາວ)	ມຍ	62.000	77.000	92.000
9	ເສົາປູນ	ເສົາ	60.000	75.000	85.000
10	ເສົາເຫຼັກ	ເສົາ	95.000	120.000	170.000
11	ຫຼັກຮົ້ວໄມ້ແກນຫຼ້ອນ	ເສົາ	25.000	35.000	55.000
12	ໜາມໜາກຈັບ	ໂຄ້ງ	170.000	200.000	220.000
13	ຕາໜ່າງໜາກອກ 1*1.8ມ	ມຍ	20.000	21.500	23.000
14	ກະແຕະໄມ້ປ່ອງ	ອັນ	25.000	30.000	35.000
ຈ	**ປະເພດທາດ, ສານພະພຸມ ແລະ ຄ່າພິທີກຳຕ່າງໆ**		**ລາຄາຕ່ຳ**	**ລາຄາກາງ**	**ລາຄາສູງ**
1	ຄ່າພິທີການຍ້າຍສານພະພຸມ	ຄັ້ງ	500.000	750.000	1.000.000
ສ	**ປະເພດທີ່ດິນ**				
1	ດິນປຸກສ້າງ	$ມ^2$		195.000	

ໝາຍເຫດ:

ຖ້າຫາກວ່າມີການຖົມດິນ, ຕ້ອງໄດ້ມີການຫັນປ່ຽນປະເພດເນື້ອທີ່ດິນທີ່ຖືກຕ້ອງຕາມລະບຽບກົດໝາຍຈຶ່ງຈະໄດ້ຮັບການທົດແທນຕາມຫົວໜ່ວຍລາຄາທົດແທນຂ້າງເທິງນີ້; ຍົກຕົວຢ່າງ: ຈາກປະເພດດິນກະສິກຳ ຫັນມາເປັນ ດິນປຸກສ້າງ ຕ້ອງໄດ້ຮັບການຢັ້ງຢືນຢ່າງຖືກຕ້ອງ ຈາກຂະແໜງການລັດທີ່ກ່ຽວຂ້ອງ, ເຈົ້າຂອງໂຄງການຈະໄດ້ຄິດໄລ່ຄ່າທົດແທນຕາມບໍລິມາດ ການຖົມດິນຕົວຈິງ ແລະ ຈະມີການຈ່າຍຄ່າຊົດເຊີຍຕາມເນື້ອທີ່ດິນທີ່ໄດ້ຮັບຜົນກະທົບ, ແຕ່ຖ້າຫາກວ່າບໍ່ມີການຢັ້ງຢືນກັນຫັນປ່ຽນເນື້ອທີ່ດິນຈາກພາກສ່ວນທີ່ກ່ຽວຂ້ອງ ຈະບໍ່ໄດ້ມີການທົດແທນ.

ມາດຕາ 17 ວິທີການກຳນົດປະເພດລາຄາຂອງມູນຄ່າທົດແທນຕໍ່ສິ່ງປຸກສ້າງທີ່ໄດ້ຮັບຜົນກະທົບ

ວິທີການກຳນົດປະເພດລາຄາຂອງມູນຄ່າທົດແທນຕໍ່ສິ່ງປຸກສ້າງ (ຕ່ຳ, ກາງ, ສູງ) ທີ່ໄດ້ຮັບຜົນກະທົບແມ່ນຖືເອົາ ຜົນການສັງລວມ ການໃຫ້ຄະແນນອີງປະກອບຍ່ອຍທີ່ມີ ໃນຮ່າງແບບຟອມກຳນົດຕາມປະເພດສິ່ງປຸກສ້າງທີ່ຄະນະກຳມະການ ລົງກວດກາຕາມສະພາບຄວາມເປັນຈິງຂອງສິ່ງປຸກສ້າງ ຮ່ວມກັບເຈົ້າຂອງສິ່ງປຸກສ້າງ, ລາຍລະອຽດແບບຟອມ ໃນເອກະສານຄັດຕິດ 1.

ມາດຕາ 18 ວິທີການຄິດໄລ່ມູນຄ່າທົດແທນໃນໄລຍະທີ່ໄດ້ຮັບຜົນກະທົບ

ມູນຄ່າທົດແທນຕໍ່ຊັບສິນທີ່ໄດ້ຮັບຜົນກະທົບແຕ່ລະປະເພດ ແມ່ນເອົາຫົວໜ່ວຍຊັບສິນທີ່ໄດ້ຮັບຜົນກະທົບ ຄູນກັບລາຄາຫົວໜ່ວຍທີ່ໄດ້ກຳນົດໃວ້ໃນມາດຕາ 16 ຂ້າງເທິງນັ້ນ, ຜົນຄູນດັ່ງກ່າວຈະອອກເປັນມູນຄ່າຕົວເລກເງິນ; ມູນຄ່າທົດແທນຈະອອກມາຫຼາຍ ຫຼື ໜ້ອຍນັ້ນ ແມ່ນຂຶ້ນກັບປະລິມານຂອງຊັບສິນ ແລະ ອັດຕາລາຄາຫົວໜ່ວຍທົດແທນ, ເຊິ່ງມີວິທີການຄິດໄລ່ດັ່ງນີ້:

1. ການຄິດໄລ່ມູນຄ່າທົດແທນຊັບສິນປະເພດເນື້ອທີ່ດິນ

   ມູນຄ່າທົດແທນ (ກີບ) = [ປະເພດເນື້ອທີ່ດິນ ($ມ^2$) x ລາຄາຫົວໜ່ວຍທົດແທນ (ກີບ/$ມ^2$)]

2. ການຄິດໄລ່ມູນຄ່າທົດແທນຊັບສິນປະເພດປຸກສ້າງ

   ລວມມູນຄ່າທົດແທນ (ກີບ) = [ປະເພດສິ່ງປຸກສ້າງ ($ມ^2$) x ລາຄາຫົວໜ່ວຍທົດແທນ (ກີບ/$ມ^2$)]

3. ການຄິດໄລ່ມູນຄ່າທົດແທນຄ່າເສຍໂອກາດຂອງຮ້ານຄ້າ/ຮ້ານບໍລິການ

ຄ່າທົດແທນຄ່າເສຍໂອກາດຂອງຮ້ານຄ້າ/ຮ້ານບໍລິການ (ກີບ) = ຄ່າສະເລ່ຍເປັນວັນ (ມູນຄ່າການມອບຈ່າຍອາກອນປະຈຳປີ/ 12 ເດືອນ/ 30 ວັນ) x ໄລຍະເວລາປິດຮ້ານຕົວຈິງ (ຢັ້ງຢືນຈາກອຳນາດການປົກຄອງບ້ານ)

ໝາຍເຫດ: ການຈັດລະດັບປະເພດສິ່ງປຸກສ້າງທີ່ຮັບຜົນກະທົບ ເຊັ່ນ: ເຮືອນ, ເຮືອນຄົວ, ເຫີບເຮືອນ ແລະ ຮ້ານຄ້າ ວ່າຈະນອນຢູ່ໃນລະດັບໃດ (ຕ່ຳ, ກາງ, ສູງ) ແມ່ນຂຶ້ນກັບການປະເມີນຕີລາຄາຕາມຕົວຈິງ ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ ຍົກຍ້າຍສິ່ງກີດຂວາງ ແລະ ຄົ້ນຄວ້າອ້າງອີງນະໂຍບາຍ, ລາຄາຫົວໜ່ວຍທົດແທນຜົນກະທົບຕາມແລວທາງ ໂຄງການປັບປຸງ ແລະ ສ້ອມແປງທາງເລກທີ 13 ໃຕ້ (ກມ 21 ຫາ ກມ 71) ຊ່ວງເຂດແຂວງບໍລິຄຳໄຊ ຮ່ວມກັບເຈົ້າຂອງສິ່ງປຸກສ້າງທີ່ໄດ້ຮັບຜົນກະທົບ ໂດຍການນຳໃຊ້ແບບຟອມປະເມີນສະເພາະ (ເອກະສານຄັດຕິດ 1).

ໝວດທີ 5
ຂໍ້ຫ້າມ

ມາດຕາ 19 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ມີພຶດຕິກຳດັ່ງນີ້:

1. ປົກປິດ, ຊຸກເຊື່ອງ, ບໍ່ຈິງໃຈແຈ້ງຂໍ້ມູນ ແລະ ປອມແປງເອກະສານ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງ ລັດ, ລວມໝູ່ ແລະ ຂອງບຸກຄົນອື່ນ;
2. ໃຊ້ຄວາມຮຸນແຮງ, ນາບຂູ່, ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານທີ່ກ່ຽວຂ້ອງໃນເວລາລົງຈັດຕັ້ງປະຕິບັດວຽກງານ;
3. ປຸກລະດົມໂຄສະນາໃສ່ຮ້າຍປ້າຍສີໃນທຸກຮູບແບບ ເປັນຕົ້ນ: ສື່ອອນລາຍຕ່າງໆ ໃນການປະຕິບັດຂໍ້ຕົກລົງສະບັບນີ້;
4. ການບຸກເບີກ, ການພັດທະນາກໍ່ສ້າງໃນເນື້ອທີ່ເຂດໂຄງການ ແລະ ມີພຶດຕິກຳອື່ນໆ ທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການ.

ມາດຕາ 20 ຂໍ້ຫ້າມ ສຳລັບພະນັກງານ

ຫ້າມພະນັກງານ ມີພຶດຕິກຳດັ່ງນີ້:

1. ປົກປິດ, ຊຸກເຊື່ອງ, ບໍ່ຈິງໃຈແຈ້ງຂໍ້ມູນ ແລະ ປອມແປງເອກະສານ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ບຸກຄົນອື່ນ;
2. ສວຍໃຊ້ໜ້າທີ່ຕຳແໜ່ງ ແລະ ຮັບສິນບົນ ເພື່ອຜົນປະໂຫຍດສ່ວນຕົວ;
3. ໃຊ້ສິດໜ້າທີ່ເກີນຂອບເຂດ ຫຼື ບໍ່ມີຄວາມຮັບຜິດຊອບຕໍ່ໜ້າທີ່ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ປະຊາຊົນ;
4. ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ຫຼື ມີພຶດຕິກຳອື່ນໆ ທີ່ບໍ່ຖືກຕ້ອງຕາມກົດໝາຍ.

ໝວດທີ 6
ການແກ້ໄຂຂໍ້ຂັດແຍ່ງ

ມາດຕາ 21 ການແກ້ໄຂຂໍ້ຂັດແຍ່ງ

ການແກ້ໄຂຂໍ້ຂັດແຍ່ງມີ 3 ຮູບແບບ ດັ່ງນີ້:

1. ຮູບແບບການປະນີປະນອມ;
2. ຮູບແບບການແກ້ໄຂທາງດ້ານບໍລິຫານ;
3. ຮູບແບບການແກ້ໄຂຕາມຂະບວນການຍຸຕິທຳ.

ມາດຕາ 22 ຮູບແບບການປະນີປະນອມ

ໃນກໍລະນີມີຂໍ້ຂັດແຍ່ງເກີດຂຶ້ນ ຄູ່ກໍລະນີຕ້ອງດຳເນີນການແກ້ໄຂຂໍ້ຂັດແຍ່ງນຳກັນໂດຍສັນຕິວິທີ, ປະນີປະນອມ ຫຼື ໂດຍຜ່ານຄົນກາງ ເພື່ອໃຫ້ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດທີ່ສົມເຫດສົມຜົນ ແລະ ເປັນທຳ.

ມາດຕາ 23 ຮູບແບບການແກ້ໄຂທາງດ້ານບໍລິຫານ

ໃນກໍລະນີ ມີຂໍ້ຂັດແຍ່ງ ກ່ຽວກັບການທົດແທນຄ່າເສຍຫາຍ ຊຶ່ງບໍ່ຮ້າຍແຮງ ໃຫ້ຄູ່ກໍລະນີເປັນເຈົ້າການຄົ້ນຄວ້າ ແລະ ແກ້ໄຂກັນກ່ອນ ຫຼື ສະເໜີຕໍ່ອົງການຄຸ້ມຄອງແກ້ໄຂ.

ມາດຕາ 24 ຮູບແບບການແກ້ໄຂຕາມຂະບວນການຍຸຕິທຳ

ໃນກໍລະນີ ເກີດຂໍ້ຂັດແຍ່ງທີ່ບໍ່ສາມາດແກ້ໄຂໄດ້ຝ່າຍໃດຝ່າຍໜຶ່ງມີສິດສະເໜີເຂົ້າສູ່ຂະບວນການຍຸຕິທຳ.

ໝວດທີ 7

ອົງການຄຸ້ມຄອງ

ມາດຕາ 25 ອົງການຄຸ້ມຄອງວຽກງານທົດແທນ

ອົງການປົກຄອງແຂວງເຮັດໜ້າທີ່ຄຸ້ມຄອງນະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຢ່າງລວມສູນຢ່າງເປັນເອກະພາບໂດຍມອບໃຫ້ຄະນະຮັບຜິດຊອບຊີ້ນຳຂັ້ນແຂວງ, ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ, ຫ້ອງການຈັດຕັ້ງປະຕິບັດງານຂັ້ນແຂວງ, ອົງການປົກຄອງເມືອງ, ອົງການປົກຄອງບ້ານ ເປັນຜູ້ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດ ຊຶ່ງປະກອບມີພາກສ່ວນຕ່າງໆດັ່ງນີ້:

1. ຄະນະຊີ້ນຳໂຄງການ ແລະ ຫ້ອງການປະສານງານຂັ້ນສູນກາງ;
2. ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ;
3. ຫ້ອງການຈັດຕັ້ງປະຕິບັດງານຂັ້ນແຂວງ;
4. ອົງການປົກຄອງເມືອງ ແລະ ບ້ານ.

ມາດຕາ 26 ຄະນະຊີ້ນຳໂຄງການ ແລະ ຫ້ອງການປະສານງານຂັ້ນສູນກາງ

ສິດ ແລະ ໜ້າທີ່ຄວາມຮັບຜິດຊອບຄະນະຊີ້ນຳໂຄງການ ແລະ ຫ້ອງການປະສານງານຂັ້ນສູນກາງມີດັ່ງນີ້:

1. ປະສານສົມທົບກັບຜູ້ໃຫ້ທຶນ, ເຜີຍແຜ່ນະໂຍບາຍ ແລະ ລະບຽບຂອງຜູ້ໃຫ້ທຶນ ໂດຍຜ່ານທີ່ປຶກສາຂອງໂຄງການ ຫຼື ໂດຍກົງຈາກຄະນະກຳມະການທີ່ກ່ຽວຂ້ອງ;
2. ຊີ້ນຳ, ນຳພາ, ສຶກສາຜົນກະທົບ, ດຳເນີນການຊົດເຊີຍ ແລະ ກວດກາຄວາມຖືກຕ້ອງສອດຄ່ອງ ໃນການວາງແຜນຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໂຄງການຕາມແຜນແມ່ບົດ ທີ່ຜ່ານການຮັບຮອງລະຫວ່າງຜູ້ໃຫ້ທຶນ ກັບ ລັດຖະບານ ແຫ່ງ ສປປ ລາວ;
3. ປະສານສົມທົບກັບໜ່ວຍງານຂັ້ນແຂວງ ແລະ ຄະນະທີ່ປຶກສາຂອງໂຄງການ ເພື່ອຈັດຕັ້ງປະຕິບັດວຽກງານໃຫ້ສະດວກ;
4. ຮັບຮອງເອົານິຕິກຳ, ອອກຂໍ້ຕົກລົງ ຫຼື ແຈ້ງການຕ່າງໆ ທີ່ກ່ຽວຂ້ອງເພື່ອຈັດຕັ້ງປະຕິບັດວຽກງານທົດແທນຄ່າເສຍຫາຍໃນເຂດໂຄງການ;
5. ປະຕິບັດຕາມການມອບໝາຍຂອງຂັ້ນເທິງ ກ່ຳຄືລັດຖະບານ.

ມາດຕາ 27 ສິດ ແລະ ໜ້າທີ່ ຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງຍົກຍ້າຍສິ່ງກີດຂວາງ

ສິດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງຍົກຍ້າຍສິ່ງກີດຂວາງ ມີດັ່ງນີ້:

1. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເຂົ້າຮ່ວມການປຶກສາຫາລືວຽກງານທົດແທນຄ່າເສຍຫາຍຈາກໂຄງການ;

2. ຕິດຕາມ, ກວດສອບ ການຈັດຕັ້ງປະຕິບັດວຽກງານທົດແທນ;
3. ເຂົ້າຮ່ວມການປຶກສາຫາລືດ້ານນະໂຍບາຍ, ລາຄາຫົວໜ່ວຍທົດແທນ ແລະ ຂໍ້ກຳນົດອື່ນທີ່ກ່ຽວຂ້ອງກັບການຈັດຕັ້ງ ປະຕິບັດວຽກງານທົດແທນ;
4. ເຜີຍແຜ່ຂໍ້ມູນຂ່າວສານໃຫ້ຜູ້ໄດ້ຮັບຜົນກະທົບໃນເຂດໂຄງການໃຫ້ທົ່ວເຖິງ, ເຂົ້າຮ່ວມການເກັບຂໍ້ມູນຜູ້ມີຄຳເຫັນ ຫຼື ຂໍ້ສະເໜີໃນການຈັດຕັ້ງປະຕິບັດໂຄງການ;
5. ເຜີຍແຜ່ນະໂຍບາຍ ແລະ ສິດທິ ໃຫ້ຜູ້ໄດ້ຮັບຜົນກະທົບຈາກໂຄງການໄດ້ຮັບຊາບຕໍ່ແນວທາງການພັດທະນາຂອງໂຄງການ, ຊຸກຍູ້ ແລະ ລະດົມແນວຄິດຂອງຜູ້ໄດ້ຮັບຜົນກະທົບໃຫ້ເຂົ້າໃຈຕໍ່ແນວທາງການພັດທະນາໂຄງການ ໃຫ້ໄດ້ຮັບໝາກຜົນ;
6. ເຂົ້າຮ່ວມຂະບວນການທົດແທນກັບຜູ້ໄດ້ຮັບຜົນກະທົບຈາກໂຄງການ ໂດຍເລີ່ມຈາກການເກັບກຳຂໍ້ມູນຊັບສິນ, ສຳຫຼວດເສດຖະກິດຄົວເຮືອນ, ເຮັດຂໍ້ຕົກລົງທົດແທນ ແລະ ຈ່າຍເງິນທົດແທນໃຫ້ຄອບຄົວທີ່ໄດ້ຮັບຜົນກະທົບຈາກໂຄງການ;
7. ເຂົ້າຮ່ວມໃນການປຶກສາຫາລື ເພື່ອໄກ່ເກ່ຍ ແລະ ແກ້ໄຂຂໍ້ຂັດແຍ່ງ ທີ່ເກີດຂຶ້ນໃນໄລຍະເວລາຈັດຕັ້ງປະຕິບັດວຽກງານຈັດສັນຍົກຍ້າຍ ແລະ ຊີດເຊີຍ;
8. ປະຕິບັດຕາມການມອບໝາຍຂອງຂັ້ນເທິງ ກໍຄືລັດຖະບານ.

ມາດຕາ 28 ສິດ ແລະ ໜ້າທີ່ ຂອງຫ້ອງການປະຕິບັດງານຂັ້ນແຂວງ

ສິດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຫ້ອງການປະຕິບັດງານຂັ້ນແຂວງ ມີດັ່ງນີ້:

1. ເປັນເສນາທິການໃຫ້ຄະນະຊີ້ນຳຂັ້ນແຂວງ ແລະ ຫ້ອງການປະສານງານຂັ້ນສູນກາງ ລາຍງານຜົນການຈັດຕັ້ງປະຕິບັດວຽກງານທົດແທນໃນເຂດໂຄງການທີ່ໄດ້ຮັບຜົນກະທົບ;
2. ວາງແຜນການເຄື່ອນໄຫວວຽກງານ, ຂຶ້ນແຜນດ້ານງົບປະມານທັງວຽກງານບໍລິຫານ ແລະ ວຽກງານການທົດແທນໃນທຸກຂົງເຂດຜົນກະທົບຂອງໂຄງການ;
3. ປະສານສົມທົບກັບທຸກຂະແໜງການທີ່ກ່ຽວຂ້ອງ ເພື່ອເຄື່ອນໄຫວວຽກງານທົດແທນຄ່າເສຍຫາຍທີ່ເກີດຂຶ້ນຈາກໂຄງການ;
4. ເຜີຍແຜ່ຂໍ້ມູນຂ່າວສານ, ລະບຽບຫຼັກການ ທີ່ກ່ຽວຂ້ອງຂອງໂຄງການ ໃຫ້ພາກສ່ວນທີ່ກ່ຽວຂ້ອງໄດ້ເຂົ້າໃຈຢ່າງທົ່ວເຖິງ ກ່ຽວກັບແນວທາງການຈັດຕັ້ງປະຕິບັດ ແລະ ໃຫ້ຄວາມຮ່ວມມືໃນການເຄື່ອນໄຫວວຽກງານ, ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ເຂົ້າຮ່ວມຂະບວນການທົດແທນ ກັບຜູ້ໄດ້ຜົນກະທົບຈາກໂຄງການ ໂດຍເລີ່ມຈາກການເກັບກຳຂໍ້ມູນຊັບສິນ, ສຳຫຼວດເສດຖະກິດຄົວເຮືອນ, ເຮັດຂໍ້ຕົກລົງທົດແທນ ແລະ ຈ່າຍເງິນທົດແທນໃຫ້ຄອບຄົວທີ່ໄດ້ຮັບຜົນກະທົບຈາກໂຄງການ;
6. ປະຕິບັດຕາມການມອບໝາຍຂອງຂັ້ນເທິງ ກໍ່ຄືລັດຖະບານ.

ມາດຕາ 29 ສິດ ແລະ ໜ້າທີ່ຂອງຫ້ອງການປະຕິບັດງານຂັ້ນເມືອງ

ສິດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຫ້ອງການປະຕິບັດງານຂັ້ນເມືອງ ມີດັ່ງນີ້:

1. ເປັນເສນາທິການໃຫ້ຄະນະຊີ້ນຳຂັ້ນເມືອງ ລາຍງານຜົນການຈັດຕັ້ງປະຕິບັດວຽກງານທົດແທນໃນເຂດໂຄງການທີ່ໄດ້ຮັບຜົນກະທົບ;
2. ວາງແຜນການເຄື່ອນໄຫວວຽກງານ, ຂຶ້ນແຜນດ້ານງົບປະມານ ທັງວຽກງານບໍລິຫານ ແລະ ວຽກງານການທົດແທນໃນທຸກຂົງເຂດເມືອງທີ່ໄດ້ຜົນກະທົບຂອງໂຄງການ;
3. ປະສານສົມທົບກັບທຸກຂະແໜງການທີ່ກ່ຽວຂ້ອງ ເພື່ອເຄື່ອນໄຫວວຽກງານທົດແທນຄ່າເສຍຫາຍທີ່ເກີດຂຶ້ນຈາກໂຄງການ;

4. ເຜີຍແຜ່ຂໍ້ມູນຂ່າວສານ, ລະບຽບຫຼັກການ ທີ່ກ່ຽວຂ້ອງຂອງໂຄງການໃຫ້ພາກສ່ວນທີ່ກ່ຽວຂ້ອງໄດ້ເຂົ້າໃຈຢ່າງ ທົ່ວເຖິງ ກ່ຽວກັບແນວທາງການຈັດຕັ້ງປະຕິບັດ ແລະ ໃຫ້ຄວາມຮ່ວມມືໃນການເຄື່ອນໄຫວວຽກງານ, ໃນ ຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ເຂົ້າຮ່ວມຂະບວນການທົດແທນ ກັບຜູ້ໄດ້ຜົນກະທົບຈາກໂຄງການ ໂດຍເລີ່ມຈາກການເກັບກຳຂໍ້ມູນຊັບສິນ, ສຳຫຼວດເສດຖະກິດຄົວເຮືອນ, ເຮັດຂໍ້ຕົກລົງທົດແທນ ແລະ ຈ່າຍເງິນທົດແທນໃຫ້ຄອບຄົວທີ່ໄດ້ຮັບຜົນ ກະທົບຈາກໂຄງການ;
6. ປະຕິບັດຕາມການມອບໝາຍຂອງຂັ້ນເທິງ ກໍ່ຄືລັດຖະບານ.

ມາດຕາ 30 ສິດ ໜ້າທີ່ຂອງອົງການປົກຄອງບ້ານ

ສິດ ໜ້າທີ່ຄວາມຮັບຜິດຊອບອົງການປົກຄອງບ້ານ ມີດັ່ງນີ້:

1. ສຶກສາອົບຮົມ ແລະ ເຜີຍແຜ່ຂໍ້ມູນຂ່າວສານໃຫ້ປະຊາຊົນຮັບຮູ້, ເຂົ້າໃຈກ່ຽວກັບແຜນພັດທະນາໂຄງການໃນ ຂອບເຂດຄວາມຮັບຜິດຊອບຂອງຕົນ;
2. ໃຫ້ຄວາມຮ່ວມມື ແລະ ເຂົ້າຮ່ວມກິດຈະກຳຂອງໂຄງການ ໃນຂອບເຂດທີ່ຕົນຮັບຜິດຊອບ;
3. ເປັນເຈົ້າການເຂົ້າຮ່ວມຂະບວນແກ້ໄຂຂໍ້ຂັດແຍ່ງຄຳຮ້ອງທຸກ ທີ່ເກີດຂຶ້ນຈາກຜູ້ໄດ້ຮັບຜົນກະທົບຈາກໂຄງການ, ສັງລວມບັນຫາທີ່ເກີດຂຶ້ນ ແລະ ແຈ້ງໃຫ້ໜ່ວຍງານທີ່ກ່ຽວຂ້ອງໄດ້ຮັບຊາບຕາມຂັ້ນຕອນ;
4. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງຂັ້ນເທິງ ກໍ່ຄືລັດຖະບານ.

ໝວດທີ 8
ອົງການກວດກາ

ມາດຕາ 31 ອົງການກວດກາ

ອົງການກວດການະໂຍບາຍ ແລະ ລາຄາຫົວໜ່ວຍທົດແທນຄ່າເສຍຫາຍຕໍ່ຊັບສິນທີ່ໄດ້ຮັບຜົນກະທົບຈາກ ໂຄງການ ປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດເລກທີ 13 ໃຕ້ ມີດັ່ງນີ້:

1. ອົງການກວດກາພາຍໃນປະກອບມີ:
   - ຄະນະຊີ້ນຳໂຄງການ.
   - ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ.
   - ຫ້ອງການປະຕິບັດງານຂັ້ນແຂວງ.
   - ອົງການປົກຄອງຂັ້ນເມືອງ.
   - ອົງການປົກຄອງບ້ານ.
2. ອົງການກວດກາພາຍນອກປະກອບມີ:
   - ສະພາປະຊາຊົນແຂວງ.
   - ອົງການກວດກາລັດແຂວງ.
   - ອົງການແນວລາວສ້າງຊາດແຂວງ.
   - ສະຫະພັນນັກຮົບເກົ່າແຂວງ.
   - ອົງການຈັດຕັ້ງມະຫາຊົນແຂວງ.
   - ປະຊາຊົນບັນດາເຜົ່າ.
   - ສື່ມວນຊົນ.

ມາດຕາ 32 ເນື້ອໃນການກວດກາ

ເນື້ອໃນການກວດກາມີດັ່ງນີ້:

1. ກວດກາການຈັດຕັ້ງປະຕິບັດວຽກງານການທົດແທນຄ່າເສຍຫາຍຜົນກະທົບຈາກໂຄງການປັບປຸງ ແລະ ສ້ອມແປງທາງຫຼວງແຫ່ງຊາດເລກທີ 13 ໃຕ້ ຕາມຂໍ້ຕົກລົງສະບັບນີ້ໄດ້ກຳນົດ;
2. ກວດກາເນື້ອໃນຄຳຮ້ອງທຸກ ແລະ ຂໍ້ມູນຂອງຜູ້ໄດ້ຮັບຜົນກະທົບ ໃຫ້ໄດ້ຮັບການແກ້ໄຂສອດຄ່ອງ, ຖືກຕ້ອງ , ໂປ່ງໃສ ແລະ ເປັນທຳ ຕາມຂໍ້ຕົກລົງສະບັບນີ້ໄດ້ກຳນົດ.

ມາດຕາ 33 ຮູບການກວດກາ

1. ກວດກາປົກກະຕິ ແມ່ນການກວດກາດຳເນີນໄປຕາມແຜນການ, ແຜນງານ ແລະ ໜ້າວຽກທີ່ໄດ້ກຳນົດໄວ້ໃນ ເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງການລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ຫຼື ຄຳສະເໜີຂອງຜູ້ໄດ້ຮັບຜົນກະທົບ ໂດຍໄດ້ແຈ້ງໃຫ້ຜູ້ຖືກກວດກາຮັບຊາບລ່ວງໜ້າ;
3. ການກວດກາແບບກະທັນຫັນ ແມ່ນການກວດການອກແຜນທີ່ມີຄວາມຈຳເປັນຮີບດ່ວນໂດຍບໍ່ມີການແຈ້ງ ໃຫ້ຜູ້ຖືກກວດກາໄດ້ຮັບຮູ້ລ່ວງໜ້າ.

ໝວດທີ 9
ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 34 ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານອັນດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ແມ່ນ ຈະໄດ້ຮັບການຍ້ອງຍໍຊົມເຊີຍຕາມລະບຽບການຂອງລັດ.

ມາດຕາ 35 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະໄດ້ຮັບການສຶກສາອົບຮົມ, ກ່າວເຕືອນ ,ປະຕິບັດວິໄນ, ປັບໃໝ, ໃຊ້ແທນທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກົດໝາຍທີ່ໄດ້ກຳນົດໄວ້.

ມາດຕາ 36 ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ມີລັກສະນະແບບເບົາບາງ ຊຶ່ງບໍ່ເປັນການ ກະທຳຜິດທາງອາຍາ ແລະ ກໍ່ຄວາມເສຍຫາຍຕ່ຳກວ່າຫ້າແສນກີບລົງມາ ຈະຕ້ອງໄດ້ຖືກຕັກເຕືອນ ແລະ ສຶກສາ ອົບຮົມ, ກໍລະນີທີ່ມີການກະທຳຜິດເປັນອາຈິນ ແລະ ມີຜົນເສຍຫາຍເກີນຫ້າແສນກີບຂຶ້ນໄປ ຈະຖືກດຳເນີນຄະດີ ຕາມກົດໝາຍ.

ມາດຕາ 37 ມາດຕະການປະຕິບັດທາງວິໄນ

ພະນັກງານ ຫຼື ເຈົ້າໜ້າທີ່ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ທີ່ມີລັກສະນະເບົາບາງ ຊຶ່ງບໍ່ເປັນການກະທຳ ຄວາມຜິດທາງອາຍາຈະຖືກຕັກເຕືອນ, ກ່າວເຕືອນຄວາມຜິດ ຫຼື ກໍລະນີບໍ່ຈິງໃຈລາຍງານ, ລຶບຫຼີກຈາກຄວາມ ຜິດຂອງຕົນ ຈະຖືກໂຈະການເລື່ອນຊັ້ນຂັ້ນເງິນເດືອນ, ການຍ້ອງຍໍ ຫຼື ປົດຕຳແໜ່ງ ຍົກຍ້າຍໄປຮັບຕຳແໜ່ງ ໃ ໝ່ທີ່ຕ່ຳກວ່າເກົ່າ ຫຼື ໃຫ້ອອກຈາກລັດຖະກອນ ແລະ ຜູ້ທີ່ຖືກປະຕິບັດວິໄນ ຕ້ອງສົ່ງຊັບສິນຂອງຕົນ ທີ່ໄດ້ມາ ໂດຍບໍ່ຖືກຕ້ອງຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

ມາດຕາ 38 ມາດຕະການທາງແພ່ງ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລວມເຖິງເຈົ້າໜ້າທີ່ຂອງລັດ ທີ່ໄດ້ ລະເມີດຂໍ້ຕົກລົງສະບັບນີ້ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ສິດ ແລະ ຜົນປະໂຫຍດຂອງປະຊາຊົນຜູ້ໄດ້ຮັບຜົນ ກະທົບຈາກໂຄງການ ເນື່ອງຈາກການກະທຳທີ່ບໍ່ຖືກຕ້ອງ ແມ່ນຈະຕ້ອງໄດ້ຮັບການແທນຄ່າເສຍຫາຍຕາມທີ່ຕົນ ໄດ້ກໍ່ຂຶ້ນຢ່າງຄົບຖ້ວນ.

ມາດຕາ 39 ມາດຕະການທາງອາຍາ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ຊຶ່ງ ກໍ່ໃຫ້ເກີດຄວາມເສຍຫາຍຢ່າງຫຼວງຫຼາຍ ໃຫ້ແກ່ສິດ, ຜົນປະໂຫຍດຂອງລັດ, ລວມໝູ່ ແລະ ປະຊາຊົນ ຜູ້ໄດ້ຮັບ ຜົນກະທົບຈາກໂຄງການ ຈະຖືກດຳເນີນຄະດີຕາມປະມວນກົດໝາຍອາຍາ.

ໝວດທີ 10
ບົດບັນຍັດສຸດທ້າຍ

ມາດຕາ 40 ການຈັດຕັ້ງປະຕິບັດ

ມອບໃຫ້ຄະນະກຳມະການທົດແທນ ແລະ ຍົກຍ້າຍສິ່ງກີດຂວາງ, ຫ້ອງການປະຕິບັດງານຂັ້ນແຂວງ, ອົງການປົກຄອງເມືອງ, ອົງການປົກຄອງບ້ານ ແລະ ຜູ້ທີ່ໄດ້ຮັບຜົນກະທົບເປັນເຈົ້າການໃນການປະສານສົມທົບ ກັບພາກສ່ວນທີ່ກ່ຽວຂ້ອງ ໃນການລົງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

ມາດຕາ 41 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດ ທາງລັດຖະການ ສິບຫ້າວັນ.

ເຈົ້າແຂວງ

ປອ. ກອງແກ້ວ ໄຊສົງຄາມ